ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

******************

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ວັນທີ 29/07/2016

# ມະຕິ
# ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
# ຄັ້ງວັນທີ 29/07/2016

ກອງປະຊຸມສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະໄໝສາມັນ ໄດ້ເປີດຂຶ້ນໃນເວລາ 08:30 ໂມງ ຂອງວັນທີ 29/07/2016 ທີ່ສໍານັກງານໃຫຍ່ ທຄຕລ ໂດຍການເປັນປະທານກອງປະຊຸມຂອງທ່ານ ດຣ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມ ໄດ້ປຶກສາຫາລືບັນຫາຕ່າງໆພ້ອມທັງໄດ້ມີມະຕິຕົກລົງດັ່ງນີ້:**

1. ກອງປະຊຸມໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດວຽກງານ, ຜົນການດໍາເນີນທຸລະກິດປະຈໍາ 6 ເດືອນຕົ້ນປີ 2016, ທິດທາງການດໍາເນີນງານໄລຍະ 6 ເດືອນທ້າຍປີ 2016 ຈາກທ່ານຜູ້ອໍານວຍການໃຫຍ່ ທຄຕລ. ເນື່ອງຈາກການທົບທວນຖານະການເງິນ ທຄຕລ ປະຈໍາ 6 ເດືອນຕົ້ນປີ 2016 ຈາກຜູ່ກວດສອບພາຍນອກບໍລິສັດເອີນສແອນຢັງລາວຈໍາກັດ ແມ່ນກໍາລັງດໍາເນີນການຢູ່, ກອງປະຊຸມ ຈຶ່ງໄດ້ເຫັນດີໃຫ້ ທຄຕລ ນໍາສະເໜີຂໍການຮັບຮອງຖານະການເງິນປະຈໍາ 6 ເດືອນຕົ້ນປີ 2016 ຈາກສະພາບໍລິຫານດ້ວຍວິທີເຮັດຈົດໝາຍວຽນຂໍຄໍາເຫັນຈາກສະມາຊິກສະພາບໍລິຫານແຕ່ລະທ່ານ ພາຍຫຼັງທີ່ຜູ່ກວດສອບພາຍນອກໄດ້ສໍາເລັດບົດລາຍງານການທົບທວນດັ່ງກ່າວ.

2. ກອງປະຊຸມເຫັນດີເປັນເອກະພາບຮັບຮອງເອົາແຜນຍຸດທະສາດດ້ານຄວາມສ່ຽງປະຈໍາປີ 2016 ແລະ ການປັບປຸງລະບຽບວ່າດ້ວຍຄະນະກໍາມະການຄຸ້ມຄອງຄວາມສ່ຽງ ທຄຕລ.

3. ກອງປະຊຸມເຫັນດີຮັບຮອງໂຄງຮ່າງຫຼັກໃນການດັດແກ້ແຜນຍຸດທະສາດໄລຍະຍາວ 2016 -2020 ຂອງ ທຄຕລ.

4. ກອງປະຊຸມເຫັນດີຮັບຮອງເອົາບໍລິສັດເອີນສແອນຢັງລາວຈໍາກັດ ເປັນທີ່ປຶກສາໃນການປະຕິບັດໂຄງການນໍາໃຊ້ຫຼັກການ Basel 2 ຂອງ ທຄຕລ.

5. ກອງປະຊຸມເຫັນດີຮັບຮອງເອົາທິດທາງການເພີ່ມທຶນຈົດທະບຽນ ໃຫ້ທະນາຄານຮ່ວມທຸລະກິດລາວ-ຫວຽດ ໃນປີ 2016 ແລະ 2017, ໂດຍ ທຄຕລ ຈະປະກອບທຶນເພີ້ມຕື່ມໃຫ້ຈໍານວນທຶນປະກອບລວມທັງໝົດເປັນ 200 ຕື້ກີບຖ້ວນ ແລະ ຮັກສາຈໍານວນທຶນດັ່ງກ່າວໄວ້ໂດຍບໍ່ປະກອບເພີ່ມໃນປີ 2017 ເຊິ່ງໃນປີ 2016 ສັດສ່ວນການຖືຮຸ້ນຂອງ ທຄຕລ ຢູ່ໃນທະນາຄານຮ່ວມທຸລະກິດລາວ-ຫວຽດ ຈະແມ່ນ 20% ແລະ 2017 ສັດສ່ວນຖືຮຸ້ນດັ່ງກ່າວຈະຍັງເຫຼືອ 16.66%.

- ກອງປະຊຸມເຫັນດີຮັບຮອງເອົາທິດທາງການເພີ່ມທຶນຈົດທະບຽນໃຫ້ ບໍລິສັດຮ່ວມທຸລະກິດປະກັນໄພລາວ-ຫວຽດຈາກ 3 ລ້ານໂດລາສະຫະລັດ ເປັນ 6 ລ້ານໂດລາສະຫະລັດ, ຮັບເພີ່ມ 1 ຂາຮຸ້ນໃໝ່ ແລະ ສັດສ່ວນການຖືຮຸ້ນຂອງ ທຄຕລ ຈະຍັງເຫຼືອ 30%.

ກອງປະຊຸມໄດ້ປິດລົງໃນເວລາ 11:30 ໂມງ ຂອງວັນດຽວກັນ.

**ປະທານສະພາບໍລິຫານ ທຄຕລ**

ດຣ. ບຸນເຫຼືອ ສິນໄຊວໍຣະວົງ